ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຜົ້ງສາລີ

ພະແນກກະສິກຳ ແລະ ປ່າໄມ້ ເລກທີ່ 806 /ກປຂ.ຜລ

ຜົ້ງສາລີ, ວັນທີ. 11 ມິຖຸນາ 2021

# ໜັງສືສະເໜີ

ຮຽນ: ທ່ານ ເຈົ້າແຂວງຜົ້ງສາລີ ທີ່ເຄົາລົບ ແລະ ນັບຖືຢ່າງສູງ

ເລື່ອງ: ສະເໜີພິຈະລະນາຮັບຮອງເອົາຈຸດສຸມພັດທະນາທີ່ເປັນບູລິມະສິດ ຕາມຂໍ້ຕົກລົງເລກທີ 65/ນຍ ເພື່ອສຸມໃສ່ຈັດຕັ້ງປະຕິບັດໃນໄລຍະ 2021-2025 ຂອງແຂວງຜົ້ງສາລີ.

- ອີງຕາມຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 65/ນຍ, ລົງວັນທີ 19/08/2016 ວ່າດ້ວຍການຮັບຮອງເອົາຈຸດສຸມພັດທະນາທີ່ເປັນບູລິມະສິດ ໄລຍະ 2016-2020;
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະປ່າໄມ້ ສະບັບເລກທີ 3927/ກປ, ລົງວັນທີ 04 ກັນຍາ 2017 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງຜົ້ງສາລີ;
- ອີງຕາມບົດບັນທຶກກອງປະຊຸມປຶກສາຫາລືກ່ຽວກັບກົນໄກການປະສານງານ, ການຕິດຕາມຊຸກຍູ້ໂຄງການລົງທຶນຂອງລັດ ຢູ່ບັນດາຈຸດສຸມພັດທະນາທີ່ເປັນບູລິມະສິດ ຕາມຂໍ້ຕົກລົງເລກທີ 65/ນຍ (ບ້ວງທ້ອງຖິ່ນຄຸ້ມຄອງ) ຄັ້ງວັນທີ 27 ມັງກອນ 2021.

ພະແນກກະສິກຳ ແລະ ປ່າໄມ້, ຂໍຖືເປັນກຽດຢ່າງສູງ ຮຽນສະເໜີມາຍັງທ່ານຊາບວ່າ ເພື່ອເຮັດໃຫ້ວຽກງານຈຸດສຸມພັດທະນາ ຕາມຂໍ້ຕົກລົງເລກທີ 65/ນຍ ສາມາດຈັດຕັ້ງປະຕິບັດໄດ້ແທດເຖິງກັບຕົວຈິງ ແລະ ສອດຄ່ອງກັບເງື່ອນໄຂຂອງແຕ່ລະເມືອງໃນທົ່ວແຂວງ, ຈຶ່ງຮຽນສະເໜີມາຍັງທ່ານຊ່ວຍພິຈາລະນາ ຮັບຮອງຄືນບັນດາຈຸດສຸມພັດທະນາ ທີ່ເປັນບູລິມະສິດ ເພື່ອສຸມໃສ່ຈັດຕັ້ງປະຕິບັດໃນໄລຍະແຕ່ປີ 2021-2025 ຂອງແຂວງຜົ້ງສາລີ ມີຄື: 1). ຈຸດສຸມພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກມີ 2 ຈຸດ 5 ບ້ານ; 2). ຈຸດສຸມຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຖາວອນໃຫ້ປະຊາຊົນມີ 10 ຈຸດ 32 ບ້ານ; 3). ຈຸດສຸມສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດມີ 9 ຈຸດ 9 ບ້ານ ແລະ 4). ຈຸດສຸມສ້າງເປັນຕົວແບບພັດທະນາຊົນນະບົດໃໝ່ມີ 1 ຈຸດ 1 ບ້ານ, ລາຍລະອຽດມີເອກະສານຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານຊ່ວຍພິຈາລະນາຕາມເຫັນສົມຄວນດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຫົວໜ້າພະແນກກະສິກຳ ແລະ ປ່າໄມ້

ພະແນກ ກະສິກຳແລະປ່າໄມ້

ນ. ດວງຈັນ ຊາມູນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າແຂວງຜົ້ງສາລີ

ເລກທີ ______/ຈຂ.ຜລ

ຜົ້ງສາລີ, ວັນທີ ............

# ຂໍ້ຕົກລົງ

## ຂອງເຈົ້າແຂວງ

## ວ່າດ້ວຍການຮັບຮອງເອົາຈຸດສຸມພັດທະນາ ທີ່ເປັນບຸລິມະສິດ

## ເພື່ອສຸມໃສ່ຈັດຕັ້ງປະຕິບັດ ໃນໄລຍະປີ 2021-2025 ຂອງແຂວງຜົ້ງສາລີ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 65/ນຍ, ລົງວັນທີ 19/08/2016 ວ່າດ້ວຍການຮັບ ຮອງເອົາຈຸດສຸມພັດທະນາທີ່ເປັນບຸລິມະສິດ ໄລຍະ 2016-2020;
- ອີງຕາມ ບົດບັນທຶກກອງປະຊຸມປຶກສາຫາລືກ່ຽວກັບກົນໄກການປະສານງານ, ການຕິດຕາມຊຸກຍູ້ໄຫຼການລົງ ທຶນຂອງລັດຢູ່ບັນດາຈຸດສຸມພັດທະນາທີ່ເປັນບຸລິມະສິດ ຕາມຂໍ້ຕົກລົງເລກທີ 65/ນຍ (ບ່ວງທ້ອງຖິ່ນຄຸ້ມຄອງ) ລົງວັນທີ 27 ມັງກອນ 2021.
- ອີງໃສ່ໜັງສືສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ ສະບັບເລກທີ 806/ກປຂ.ຜລ, ລົງວັນທີ 11 ພຶດສະພາ 2021.

## ເຈົ້າແຂວງ ຕົກລົງ:

ມາດຕາ 1: ຮັບຮອງເອົາຈຸດສຸມພັດທະນາ ທີ່ເປັນບຸລິມະສິດ ເພື່ອສຸມໃສ່ຈັດຕັ້ງປະຕິບັດ ໃນໄລຍະ 5 ປີ, ແຕ່ປີ 2021-2025 ຂອງແຂວງຜົ້ງສາລີ, ເຊິ່ງລາຍລະອຽດ ມີດັ່ງນີ້:

1). **ຈຸດສຸມພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ**

ມີ 2 ຈຸດສຸມ 5 ບ້ານ ຄື: ຈຸດສຸມມາລີເທົ່າ ເມືອງຍອດອູ 4 ບ້ານ, ຈຸດສຸມນ້ຳຮາງ ເມືອງສຳພັນ 1 ບ້ານ.

2). **ຈຸດສຸມຈັດສັນພູມລຳເນົາ ແລະ ປ່ອນທຳມາຫາກິນຖາວອນໃຫ້ປະຊາຊົນບັນດາເຜົ່າ**

ມີ 10 ຈຸດສຸມ 32 ບ້ານ ຄື: 1).ຈຸດສຸມງາຍໃຕ້ ເມືອງຜົ້ງສາລີ 6 ບ້ານ, 2).ຈຸດສຸມປາກແພ 1 ບ້ານ, 3).ຈຸດສຸມກຸງລຸກ 1 ບ້ານ, 4).ຈຸດສຸມລີບຮຸນ 1 ບ້ານ ທີ່ຂຶ້ນກັບເມືອງໃໝ່, 5).ຈຸດສຸມແສນລາດ ເມືອງຂວາ 6 ບ້ານ, 6).ຈຸດສຸມສະໜຳຮະ 2 ບ້ານ, 7).ຈຸດສຸມນ້ຳລີ 1 ບ້ານ ທີ່ຂຶ້ນກັບເມືອງສຳພັນ, 8).ຈຸດສຸມບ້ານຍໍ້ ເມືອງບຸນເໜືອ 6 ບ້ານ, 9).ຈຸດສຸມອູເໜືອ ເມືອງຍອດອູ 1 ບ້ານ ແລະ 10).ຈຸດສຸມລ້ອງນາຍເກົ່າ ເມືອງບຸນໃຕ້ 8 ບ້ານ.

3). **ຈຸດສຸມສ້າງບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ**

ມີ 9 ຈຸດ 9 ບ້ານ ຄື: 1).ຈຸດສຸມງາຍໃຕ້ ເມືອງຜົ້ງສາລີ, 2). ຈຸດສຸມລີບຮຸນ ເມືອງໃໝ່, 3).ຈຸດສຸມນ້ຳບຸດ ກຸ່ມແສນລາດ, 4).ຈຸດສຸມສິນໄຊ ກຸ່ມສິນໄຊ ເມືອງຂວາ, 5).ຈຸດສຸມນ້ຳລີ ກຸ່ມນ້ຳລີ ເມືອງສຳພັນ, 6).ຈຸດສຸມບ້ານຍໍ້ ກຸ່ມບ້ານຍໍ້ ເມືອງບຸນເໜືອ, 7).ຈຸດສຸມອູເໜືອ ເມືອງຍອດອູ, 8). ຈຸດສຸມລ້ອງນາຍເກົ່າ ກຸ່ມລ້ອງນາຍເກົ່າ ແລະ 9).ຈຸດສຸມສຳພັນໄຊ ກຸ່ມສຳພັນໄຊ ເມືອງບຸນໃຕ້.

4). ຈຸດສຸມສ້າງເປັນຕົວແບບພັດທະນາຊົນນະບົດໃໝ່

ມີ 1 ຈຸດ 1 ບ້ານ ຄື: ຈຸດສຸມບ້ານຍໍ້ ກຸ່ມບ້ານຍໍ້ ເມືອງບຸນເໜືອ.

ມາດຕາ2: ການຮັບຮອງເອົາບັນດາຈຸດສຸມພັດທະນາດັ່ງກ່າວ ເປັນເປົ້າໝາຍໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ກໍ່ຄືແຜນພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງແຂວງຜົ້ງສາລີ ໃນໄລຍະ 5 ປີ ແຕ່ປີ 2021-2025;

ມາດຕາ3: ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ ເປັນໃຈກາງປະສານສົມທົບກັບບັນດາພະແນການ, ອົງການ, ອົງການຈັດຕັ້ງມະຫາຊົນ, ກອງບັນຊາການ ປກຊ-ປກສ ແລະ ບັນດາເມືອງ ເຜີຍແຜ່ການຮັບຮອງເອົາຈຸດສຸມພັດທະນາດັ່ງກ່າວ ພ້ອມທັງຜັນຂະຫຍາຍສ້າງເປັນແຜນການ, ໂຄງການອັນລະອຽດ ເພື່ອຈັດສັນງົບປະມານ ແລະ ລະດົມທຶນຈາກບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ, ອົງການຈັດຕັ້ງສາກົນ, ສະຖາບັນການເງິນ ແລະ ພາກສ່ວນຕ່າງໆໃນສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃສ່ບັນດາຈຸດສຸມດັ່ງກ່າວ ເພື່ອພັດທະນາໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ ໄລຍະ 5 ປີ (2021-2025);

ມາດຕາ4: ມອບໃຫ້ບັນດາຫົວໜ້າພະແນກການ, ຫົວໜ້າອົງການທຽບເທົ່າ ແລະ ບັນດາເຈົ້າເມືອງໃນທົ່ວແຂວງເປັນເຈົ້າການໃນການຈັດຕັ້ງປະຕິບັດ ການຮັບຮອງເອົາຈຸດສຸມດັ່ງກ່າວນີ້ ເພື່ອຊຸກຍູ້ບັນດາຂະແໜງການຂອງຕົນ ໃຫ້ມີແຜນງານ, ໂຄງການອັນລະອ jດ ເພື່ອສຸມທຶນຮອນ, ສຸມກຳລັງຄົນໃສ່ຈຸດສຸມດັ່ງກ່າວໃຫ້ສຳເລັດຜົນຕາມຄາດໝາຍທີ່ວາງໄວ້;

ມາດຕາ5: ທຸກອົງການຈັດຕັ້ງພັກ - ລັດ, ອົງການປົກຄອງແຕ່ລະຂັ້ນ, ອົງການຈັດຕັ້ງສັງຄົມ ແລະ ທຸກພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ ດ້ວຍຄວາມຮັບຜິດຊອບສູງ ແລະ ໃຫ້ໄດ້ຮັບຜົນດີ;

ມາດຕາ6: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ບ່ອນສົ່ງ:
- ເຈົ້າແຂວງ, ຮອງເຈົ້າແຂວງ, ຄະນະຊີ້ນຳຂັ້ນແຂວງ
- ພະແນກການກ່ຽວຂ້ອງອ້ອມຂ້າງແຂວງ
- ຫ້ອງວ່າການແຂວງ
- ສະພາປະຊາຊົນແຂວງ
- ກອງບັນຊາການ ປກຊ, ປກສ
- ອົງການຈັດຕັ້ງມະຫາຊົນ
- ບັນດາທ່ານເຈົ້າເມືອງ ແລະ ພາກສ່ວນກ່ຽວຂ້ອງ 7 ເມືອງ
- ສຳເນົາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຜົ້ງສາລີ

ພະແນກກະສິກຳ ແລະ ປ່າໄມ້

ຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ

ເລກທີ ...44.../ຂພຊສ.ກປ

ຜົ້ງສາລີ, ວັນທີ...11...ພຶດສະພາ 2021

## ຈຸດສຸມຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຖາວອນໃຫ້ປະຊາຊົນໄລຍະ 5ປີ(2021-2025) ຂອງແຂວງຜົ້ງສາລີ

| ລ/ດ | ການກຳນົດເກົ່າ ໄລຍະປີ 2016-2020 | ສະເໜີກຳນົດໃໝ່ (ເອົາແຕ່ 3-5 ບ້ານ/1 ຈຸດສຸມ) ທີ່ມີເງື່ອນໄຂທ່າແຮງ ແລະ ສາມາດປະຕິບັດໄດ້ | ຈຳນວນ | | ຈຳນວນບ້ານ | | | ຈຳນວນຄອບຄົວ | | | ຈຳນວນພົນ | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|
| | | | ເມືອງ | ຈຸດກຸ່ມ | ສົມກັບ | ພົ້ນທຸກ | ບໍ່ພົ້ນທຸກ | ທັງໝົດ | ພົ້ນທຸກ | ບໍ່ພົ້ນທຸກ | ທັງໝົດ | ຍິງ | |
| **2** | | **ແຂວງຜົ້ງສາລີ** | **7** | **32** | **-** | **6** | **15** | **2.710** | **1.004** | **1.706** | **14.674** | **7.225** | |
| **I** | **ເມືອງຜົ້ງສາລີ** | **ເມືອງຜົ້ງສາລີ** | **1** | **6** | **-** | | **6** | **302** | **2** | **300** | **1.964** | **944** | |
| **1)** | **ຈຸດສຸມກຸ່ມງາຍໃຕ້** | **1) ຈຸດສຸມກຸ່ມງາຍໃຕ້** | | | | | | | | | | | |
| 1 | ບ ງາຍໃຕ້ | ບ. ງາຍໃຕ້ | | 1 | | | 1 | 53 | | 53 | 267 | 135 | |
| 2 | ບ ສິບຈ່າຍ | ບ. ສິບຈ່າຍ | | 1 | | | 1 | 63 | | 63 | 398 | 183 | |
| 3 | ບ ຢາວຟາງ | ບ. ຢາວຟາງ | | 1 | | | 1 | 88 | 1 | 87 | 620 | 310 | |
| 4 | ບ ຕ້າແສນຜົ້ງ | ບ. ຕ້າແສນຜົ້ງ | | 1 | | | 1 | 27 | 1 | 26 | 185 | 85 | |
| 5 | ບ ເລົ້າແທນ | ບ. ເລົ້າແທນ | | 1 | | | 1 | 15 | | 15 | 94 | 41 | |
| 6 | ບ ເລົ້າຕ່ຽວ | ບ. ສຳມີຫຼວງ | | 1 | | | 1 | 56 | | 56 | 400 | 190 | |
| 7 | ບ ສຳມີຫຼວງ | | | | | | | | | | | | |
| 8 | ບ ສິບງາມ | | | | | | | | | | | | |
| 9 | ບ ຈັ່ງເຕີນ | | | | | | | | | | | | |

| | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| **II** | ເມືອງໃໝ່ | ເມືອງໃໝ່ | **1** | **3** | **-** | | **-** | **185** | **12** | **173** | **1.102** | **576** | |
| **2)** | ຈຸດສຸມກຸ່ມປາກແພ | **2) ກຸ່ມບ້ານກຸງລຸກ** | | | | | | | | | | | |
| 1 | ບ ປາກແພ+ພຽງລັບ | ບ. ແສນເງິນ+ບ. ກຸງຣະ+ບ. ຫຍ້າຍຸງ | | 1 | | | | 111 | - | 111 | 735 | 373 | |
| 2 | ບ ປາກຍວນ | **3) ຈຸດສຸມກຸ່ມປາກແພ** | | | | | | | | | | | |
| 3 | ບ ຍາງໃຕ້ | ບ. ປາກແພ | | 1 | | | | 44 | 12 | 32 | 219 | 123 | |
| 4 | ບ ສຸງລຸງ | **4) ກຸ່ມບ້ານສິບຣຸນ** | | | | | | | | | | | |
| 5 | ບ ປາງຮັ້ງໃຕ້ | ບ. ຫ້ວຍກາງ | | 1 | | | | 30 | - | 30 | 148 | 80 | |
| 6 | ບ ປາງຮັ້ງເໜືອ+ປາກວຽງ | | | | | | | | | | | | |
| 7 | ບ ຈະປີ | | | | | | | | | | | | |
| 8 | ບ ຈະເມີຍ | | | | | | | | | | | | |
| 9 | ບ ຕ່າງໂຊຍ | | | | | | | | | | | | |
| **III** | ເມືອງຂວາ | ເມືອງຂວາ | **1** | **6** | **-** | **-** | **6** | **339** | **68** | **271** | **1.606** | **802** | **-** |
| **3)** | ຈຸດສຸມກຸ່ມແສນລາດ | **5) ຈຸດສຸມກຸ່ມແສນລາດ** | | | | | | | | | | | |
| 1 | ບ ແສນລາດ | ບ. ຫ້ວຍສະແລງ | | 1 | | | 1 | 59 | 7 | 52 | 323 | 148 | |
| 2 | ບ ກຸງເກື້ອຍ | ບ. ແສນລາດ | | 1 | | | 1 | 47 | 6 | 41 | 254 | 131 | |
| 3 | ບ ໂພນສະອາດ | ບ. ກຸງເກື້ອຍ | | 1 | | | 1 | 46 | 16 | 30 | 213 | 111 | |
| 4 | ບ ອິມເພຍ | ບ. ຍາງເຕີຍ | | 1 | | | 1 | 76 | 9 | 67 | 332 | 165 | |
| 5 | ບ ຫ້ວຍສະແລງ | ບ. ວຽງຄຳ | | 1 | | | 1 | 45 | - | 45 | 191 | 98 | |
| 6 | ບ ຍາງເຕີຍ | ບ. ນາ | | 1 | | | 1 | 66 | 30 | 36 | 293 | 149 | |
| 7 | ບ ອິມທັບ | | | | | | | | | | | | |
| 8 | ບ ນ້ຳບຸດ | | | | | | | | | | | | |
| 9 | ບ ນາ | | | | | | | | | | | | |
| 10 | ບ ວຽງຄຳ | | | | | | | | | | | | |
| 11 | ບ ອິມພຣຸ | | | | | | | | | | | | |
| **IV** | ເມືອງສຳພັນ | ເມືອງສຳພັນ | **1** | **3** | **-** | **-** | **3** | **311** | **98** | **213** | **1.654** | **815** | |
| **4)** | ຈຸດສຸມກຸ່ມມຸຈິກາງ | ຈຸດສຸມກຸ່ມມຸຈິກາງ | | | | | | | | | | | |
| 1 | ບ ພຸຊາງໃໝ່ | | | | | | | | | | | | |
| 2 | ບ ພຸຊາງເກົ່າ | | | | | | | | | | | | |
| 3 | ບ ນ້ຳຖ່ວງ | | | | | | | | | | | | |

| | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| 4 | ບ ມຸຈິກາງ | | | | | | | | | | | | |
| 5 | ບ ມຸຈິເກົ່າ | | | | | | | | | | | | |
| 6 | ບກອງກະວິ | | | | | | | | | | | | |
| 7 | ບ ລາວປານI | | | | | | | | | | | | |
| 8 | ບ ລາວປານII | | | | | | | | | | | | |
| 9 | ບ ຜິງກຸ່ | | | | | | | | | | | | |
| **5)** | **ຈຸດສຸມກຸ່ມສະໜ່ຳຣະ** | **6) ຈຸດສຸມກຸ່ມສະໜ່ຳຣະ** | | | | | **2** | **104** | **45** | **59** | **585** | **292** | |
| 1 | ບ. ແສນຫຼວງ | ບ. ມີກພະ | | 1 | | | 1 | 65 | 21 | 44 | 357 | 178 | |
| 2 | ບ. ພຽງ | ບ. ສະໜາມຣະ | | 1 | | | 1 | 39 | 24 | 15 | 228 | 114 | |
| 3 | ບ. ດອນຈັນ | **7) ກຸ່ມບ້ານນ້ຳລີ** | | | | | **1** | **207** | **53** | **154** | **1.069** | **523** | |
| 4 | ບ. ລາຊາເກົ່າ | ບ. ນ້ຳລີ | | 1 | | | 1 | 207 | 53 | 154 | 1.069 | 523 | |
| 5 | ບ. ເພຍຫຼວງ | | | | | | | | | | | | |
| 6 | ບ. ອາເຊີ | | | | | | | | | | | | |
| 7 | ບ. ອີແລັກ | | | | | | | | | | | | |
| 8 | ບ. ມີກຍິນ | | | | | | | | | | | | |
| 9 | ບ. ສະນ່ຳຣະ | | | | | | | | | | | | |
| **V** | ເມືອງບຸນເໜືອ | ເມືອງບຸນເໜືອ | **1** | **6** | **0** | **6** | **0** | **532** | **406** | **126** | **2.730** | **1.323** | |
| **6)** | ຈຸດສຸມກຸ່ມບ້ານຢໍ່ | 8) ຈຸດສຸມກຸ່ມບ້ານຢໍ່ | | | | | | | | | | | |
| 1 | ບ.ຢໍ່ | ບ.ຢໍ່ | | 1 | | 1 | | 202 | 151 | 51 | 1.013 | 490 | |
| 2 | ບ. ເດືອ | ບ. ເດືອ | | 1 | | 1 | | 103 | 69 | 34 | 483 | 246 | |
| 3 | ບ. ຊຽງປີ | ບ. ຊຽງປີ | | 1 | | 1 | | 66 | 63 | 3 | 324 | 154 | |
| 4 | ບ. ສີມບຸນ | ບ. ສີມບຸນ | | 1 | | 1 | | 49 | 41 | 8 | 237 | 106 | |
| 5 | ບ. ນ່ຳຮອຍ | ບ. ນ່ຳຮອຍ | | 1 | | 1 | | 66 | 53 | 13 | 393 | 182 | |
| 6 | ບ. ຫ້ວຍສຸງ | ບ. ຫ້ວຍສຸງ | | 1 | | 1 | | 46 | 29 | 17 | 280 | 145 | |
| **VI** | ເມືອງຍອດອຸ | ເມືອງຍອດອຸ | **1** | | | **1** | **0** | **400** | **354** | **46** | **2.233** | **1.079** | |
| **7)** | ຈຸດສຸມບ້ານອຸເໜືອ | 9) ຈຸດສຸມບ້ານອຸເໜືອ | | | | **1** | **0** | **400** | **354** | **46** | **2.233** | **1.079** | |
| **VII** | ເມືອງບຸນໃຕ້ | ເມືອງບຸນໃຕ້ | **1** | **8** | **0** | **0** | **0** | **641** | **64** | **577** | **3.385** | **1.686** | |
| **8)** | ຈຸດສຸມກຸ່ມລ້ອງນາຍ | 10) ຈຸດສຸມກຸ່ມລ້ອງນາຍ | | | | | | | | | | | |
| 1 | ບ້ານ ລ້ອງນາຍເກົ່າ | ບ. ລ້ອງນາຍເກົ່າ | | 1 | | | | 153 | 30 | 123 | 765 | 373 | |

| | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| 2 | ບ້ານ ລ້ອງນາຍໃໝ່ | ບ. ລ້ອງນາຍໃໝ່ | | 1 | | | | 53 | 11 | 42 | 292 | 146 | |
| 3 | ບ້ານ ບໍ່ຫາດ+ຈາຫວາງ | ບ. ບໍ່ຫາດ+ຈາຫວາງ | | 1 | | | | 121 | 13 | 108 | 738 | 376 | |
| 4 | ບ້ານ ບໍ່ນ້ອຍ | ບ. ບໍ່ນ້ອຍ | | 1 | | | | 34 | 7 | 27 | 171 | 87 | |
| 5 | ບ້ານ ປາງໄຄ | ບ. ປາງໄຄ | | 1 | | | | 73 | 2 | 71 | 369 | 180 | |
| 6 | ບ້ານ ລາວກູ້ໃໝ່ | ບ. ລາວກູ້ໃໝ່ | | 1 | | | | 58 | 0 | 58 | 285 | 140 | |
| 7 | ບ້ານ ພິວເຈີ | ບ. ພິວເຈີ | | 1 | | | | 71 | 0 | 71 | 359 | 180 | |
| 8 | ບ້ານ ລາວກູ້ເກົ່າ | ບ. ລາວກູ້ເກົ່າ | | 1 | | | | 78 | 1 | 77 | 406 | 204 | |

ຫົວໜ້າພະແນກກະສິກຳ ແລະ ປ່າໄມ້

ພະແນກ ກະສິກຳແລະປ່າໄມ້

ນ. ດວງຈັນ ຊາມຸນຕີ

ຫົວໜ້າຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ

ສົມສະນິດ ປ່າວຈັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຜົ້ງສາລີ
ພະແນກກະສິກຳ ແລະ ປ່າໄມ້
ຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ

ເລກທີ ..47../ຂພຊສ.ກປ
ຜົ້ງສາລີ, ວັນທີ.11...ພຶດສະພາ 2021

# ຈຸດສຸມສ້າງເປັນຕົວແບບພັດທະນາຊົນນະບົດໃໝ່ ໄລຍະ 5ປີ(2021-2025) ຂອງແຂວງຜົ້ງສາລີ

| ລ/ດ | ຊື່ເມືອງ, ກຸ່ມບ້ານ ແລະ ຈຸດສຸມ | ຈຳນວນບ້ານ | | | ຈຳນວນຄອບຄົວ | | | ຈຳນວນພົນ | | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| | | ຍື່ນກັບ | ພົ້ນທຸກ | ບໍ່ພົ້ນທຸກ | ທັງໝົດ | ພົ້ນທຸກ | ບໍ່ພົ້ນທຸກ | ທັງໝົດ | ຍິງ | |
| | **ເມືອງບຸນເໜືອ** | **6** | **6** | **-** | **202** | **151** | **51** | **1.013** | **490** | |
| | ຈຸດສຸມ/ກຸ່ມບ້ານຢໍ່ | | | | | | | | | |
| 1 | ບ. ຢໍ່ | 6 | 6 | - | 202 | 151 | 51 | 1.013 | 490 | |

ຫົວໜ້າພະແນກກະສິກຳ ແລະ ປ່າໄມ້

ນ. ດວງຈັນ ຊານຸພຸດຕີ

ຫົວໜ້າຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ

ສົມສະນິດ ປ່າວຈັນ